# ພຣູປະກັນເງິນກູ້ ພລັສ

ບັນລຸເປົ້າໝາຍຂອງທ່ານ ແລະ ປົກປ້ອງ
ການເງິນໃນອະນາຄົດຂອງຄົນທີ່ທ່ານຮັກ

PRUDENTIAL

Listening. Understanding. Delivering.

## ກໍລະນີສຶກສາ

**ທ້າວ ຄຳພັນ**

- ອາຍຸ 45 ປີ
- ຊື້ຜະລິດຕະພັນ **ພຣູປະກັນເງິນກູ້ ພລັສ** ສຳລັບສິນເຊື່ອເຮືອນ

| **ວົງເງິນຄຸ້ມຄອງທັງໝົດ** | **ໄລຍະເວລາ** |
| --- | --- |
| **100.000.000 ກີບ** | **10 ປີ** |

- ໄດ້ເສຍຊີວິດໃນປີທີ 6

**ໝາຍເຫດ**:

- ຄ່າທຳນຽມແມ່ນຂຶ້ນກັບເງື່ອນໄຂຂອງແຕ່ລະບຸກຄົນ ແລະ ຕົວເລກທີ່ສະແດງແມ່ນໄດ້ກຳນົດຕາມເງື່ອນໄຂຂອງທ້າວ ຄຳພັນ.
- ຈຳນວນສິນປະກັນແມ່ນອີງໃສ່ຕາຕະລາງເບື້ອງຕົ້ນຂອງຜົນປະໂຫຍດໃນເວລາຊື້ ຊຶ່ງອາດຈະສູງ ຫຼື ຕໍ່າກວ່າຈຳນວນເງິນກູ້ຕົວຈິງທີ່ຍັງຄ້າງຢູ່.

## ຕົວຢ່າງທີ 1 ຜົນປະໂຫຍດທີ່ທ້າວ ຄຳພັນຈະໄດ້ຮັບ ຖ້າຫາກລາວໄດ້ປະກັນຊີວິດທີ່ຈຳນວນວົງເງິນປະກັນຄົງທີ່




| ຜົນປະໂຫຍດຕ່າງໆ | ແຜນຄຸ້ມຄອງພື້ນຖານ | ແຜນຄຸ້ມຄອງເພີ່ມເຕີມ ⭐ |
| --- | --- | --- |
| ສົມມຸດວ່າເງິນກູ້ທະນາຄານໃນປີທີ 6 ຍັງເຫຼືອ **70.000.000 ກີບ** | | |
| ຜົນປະໂຫຍດເນື່ອງຈາກການເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນໃນທຸກກໍລະນີ | ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 1** ໃນສັນຍາຈະໄດ້ຮັບ: **70.000.000 ກີບ**<br>ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ໃນສັນຍາຈະໄດ້ຮັບເງິນສ່ວນທີ່ເຫຼືອຈາກຕາຕະລາງລາຍລະອຽດຂອງຜົນປະໂຫຍດຈຳນວນ: **30.000.000 ກີບ**<br>ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ໃນສັນຍາຈະໄດ້ຮັບຜົນປະໂຫຍດເງິນສົ່ງສະການຈຳນວນ: **3.000.000 ກີບ** | ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 1** ໃນສັນຍາຈະໄດ້ຮັບ: **70.000.000 ກີບ**<br>ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ໃນສັນຍາຈະໄດ້ຮັບເງິນສ່ວນທີ່ເຫຼືອຈາກຕາຕະລາງລາຍລະອຽດຂອງຜົນປະໂຫຍດຈຳນວນ: **30.000.000 ກີບ**<br>ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ໃນສັນຍາຈະໄດ້ຮັບຜົນປະໂຫຍດເງິນສົ່ງສະການຈຳນວນ: **3.000.000 ກີບ** |
| ຜົນປະໂຫຍດໃນກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນຈາກອຸປະຕິເຫດ | | ສະເພາະແຜນຄຸ້ມຄອງເພີ່ມເຕີມເທົ່ານັ້ນ, ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ຈະໄດ້ຮັບຜົນປະໂຫຍດ: **100.000.000 ກີບ** |
| ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 1** ຈະໄດ້ຮັບຜົນປະໂຫຍດສູງສຸດເຖິງ | **70.000.000 ກີບ** | |
| ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ຈະໄດ້ຮັບຜົນປະໂຫຍດສູງສຸດເຖິງ | **33.000.000 ກີບ** | **133.000.000 ກີບ** (ລວມຜົນປະໂຫຍດຈາກອຸປະຕິເຫດ ແລະ ຜົນປະໂຫຍດເງິນສົ່ງສະການ) |
| ຜົນປະໂຫຍດທັງໝົດສູງສຸດເຖິງ | **103.000.000 ກີບ** | **203.000.000 ກີບ** |

## ຕົວຢ່າງທີ 2 ຜົນປະໂຫຍດທີ່ທ້າວ ຄຳພັນຈະໄດ້ຮັບ ຖ້າຫາກລາວໄດ້ປະກັນຊີວິດທີ່ຈຳນວນວົງເງິນປະກັນຫຼຸດລົງ




| ຜົນປະໂຫຍດຕ່າງໆ | ແຜນຄຸ້ມຄອງພື້ນຖານ | ແຜນຄຸ້ມຄອງເພີ່ມເຕີມ ⭐ |
| --- | --- | --- |
| ສົມມຸດວ່າເງິນກູ້ທະນາຄານໃນປີທີ 6 ຍັງເຫຼືອ **70.000.000 ກີບ** | | |
| ຜົນປະໂຫຍດເນື່ອງຈາກການເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນໃນທຸກກໍລະນີ | ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 1** ໃນສັນຍາຈະໄດ້ຮັບ: **70.000.000 ກີບ**<br>ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ໃນສັນຍາຈະໄດ້ຮັບເງິນສ່ວນທີ່ເຫຼືອຈາກຕາຕະລາງລາຍລະອຽດຂອງຜົນປະໂຫຍດຈຳນວນ: **3.000.000 ກີບ** | ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 1** ໃນສັນຍາຈະໄດ້ຮັບ: **70.000.000 ກີບ**<br>ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ໃນສັນຍາຈະໄດ້ຮັບເງິນສ່ວນທີ່ເຫຼືອຈາກຕາຕະລາງລາຍລະອຽດຂອງຜົນປະໂຫຍດຈຳນວນ: **3.000.000 ກີບ** |
| ຜົນປະໂຫຍດໃນກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນຈາກອຸປະຕິເຫດ | | ສະເພາະແຜນຄຸ້ມຄອງເພີ່ມເຕີມເທົ່ານັ້ນ, ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ຈະໄດ້ຮັບຜົນປະໂຫຍດ: **70.000.000 ກີບ** |
| ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 1** ຈະໄດ້ຮັບຜົນປະໂຫຍດສູງສຸດເຖິງ | **70.000.000 ກີບ** | |
| ຜູ້ໄດ້ຮັບຜົນປະໂຫຍດ**ລຳດັບທີ 2** ຈະໄດ້ຮັບຜົນປະໂຫຍດສູງສຸດເຖິງ | **3.000.000 ກີບ** | **73.000.000 ກີບ** (ລວມຜົນປະໂຫຍດຈາກອຸປະຕິເຫດ ແລະ ຜົນປະໂຫຍດເງິນສົ່ງສະການ) |
| ຜົນປະໂຫຍດທັງໝົດສູງສຸດເຖິງ | **73.000.000 ກີບ** | **143.000.000 ກີບ** |

**ໝາຍເຫດສຳຄັນ**:

- ຜົນປະໂຫຍດເພີ່ມເຕີມຂອງການເສຍຊີວິດ ແລະ ເສຍອົງຄະແບບສິ້ນເຊີງ ແລະ ຖາວອນເນື່ອງຈາກອຸປະຕິເຫດ*ເປັນພຽງທາງເລືອກເພີ່ມເຕີມ ທ່ານສາມາດເລືອກ ຫຼື ບໍ່ເລືອກເອົາກໍ່ໄດ້.
- ຜົນປະໂຫຍດເມື່ອຄົບກຳນົດແມ່ນບໍ່ມີ ສຳລັບຜະລິດຕະພັນນີ້.
- ທ່ານສາມາດເລືອກປະເພດຄວາມຄຸ້ມຄອງໄດ້ທັງແບບປະກັນຊີວິດທີ່ຈຳນວນວົງເງິນປະກັນຫຼຸດລົງ ແລະ ປະກັນຊີວິດທີ່ຈຳນວນວົງເງິນປະກັນຄົງທີ່.
- ທ່ານສາມາດຍົກເລີກສັນຍາພາຍໃນ 30 ມື້ (ໃນຊ່ວງພິຈາລະນາສັນຍາ) ນັບຕັ້ງແຕ່ມື້ທີ່ທ່ານໄດ້ຮັບເອກະສານສັນຍາປະກັນໄພ.
- ມູນຄ່າເວນຄືນຈະຊຳລະໃຫ້ທ່ານກໍ່ຕໍ່ເມື່ອມີການຍົກເລີກສັນຍາໃນລະຫວ່າງທີ່ສັນຍາຍັງມີການຄຸ້ມຄອງ. ຈຳນວນມູນຄ່າເວນຄືນແມ່ນໄດ້ສະແດງຢູ່ໃນຕາຕະລາງລາຍລະອຽດຂອງຜົນປະໂຫຍດຈາກທາງບໍລິສັດ ( ເຖິງຢ່າງໃດກໍ່ຕາມ, ການຍົກເລີກສັນຍາໄວກ່ອນກຳນົດ ອາດຈະເຮັດໃຫ້ລູກຄ້າເສຍຜົນປະໂຫຍດ).
- ສັນຍາປະກັນນີ້ມີຂໍ້ຍົກເວັ້ນບາງປະການເຊັ່ນ: ການຂ້າຕົວຕາຍ, ຕິດເຊື້ອພະຍາດພູມຄຸ້ມກັນຮ່າງກາຍບົກພ່ອງ (HIV) , ການກະທຳຜິດທາງອາຍາ, ການນຳໃຊ້ສານເສບຕິດ, ການດື່ມເຫຼົ້າ ຫຼື ມີໂລກປະຈຳຕົວທີ່ຮ້າຍແຮງ.
ພວກເຮົາແນະນຳໃຫ້ທ່ານປຶກສາກັບທີ່ປຶກສາທາງດ້ານການເງິນຂອງພຣູເດັນໂຊລ໌ເພື່ອຄຳແນະນຳທີ່ດີທີ່ສຸດທີ່ທ່ານຕ້ອງການ. ຂໍ້ກຳນົດ ແລະ ເງື່ອນໄຂຢູ່ໃນແຜ່ນພັບນີ້ແມ່ນບໍ່ຄົບຖ້ວນສົມບູນ. ສຳລັບຂໍ້ມູນເພີ່ມຕື່ມ ກະລຸນາກວດເບິ່ງລາຍລະອຽດທີ່ຂໍ້ກຳນົດ ແລະ ເງື່ອນໄຂຂອງຜະລິດຕະພັນໄດ້.



# ເປັນຫຍັງທ່ານຈຶ່ງຄວນມີ ພຣູປະກັນເງິນກູ້ພລັສ?

ໃນຂະນະທີ່ທ່ານກຳລັງພະຍາຍາມບັນລຸເປົ້າໝາຍທີ່ທ່ານຕັ້ງໄວ້ ການກູ້ຢືມເງິນຈາກທະນາຄານ ເພື່ອຊ່ວຍໃຫ້ທ່ານ**ຊື້ລົດເປັນຂອງຕົນເອງ, ດຳເນີນທຸລະກິດຂະໜາດນ້ອຍ ຫຼື ຊື້ເຮືອນໄດ້**. ການມີແຜນຄຸ້ມຄອງການກູ້ຢືມເງິນເປັນສິ່ງທີ່ດີກວ່າ. ສົມມຸດວ່າເຫດການບໍ່ຄາດຝັນເກີດຂຶ້ນກັບທ່ານ ຕົວຢ່າງ: ເກີດອຸປະຕິເຫດຊຶ່ງສົ່ງຜົນໃຫ້ເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ ເຊິ່ງໃນກໍລະນີນີ້ **ພຣູປະກັນເງິນກູ້ ພລັສ** ສາມາດຊ່ວຍຄຸ້ມຄອງເລື່ອງການເງິນໃຫ້ແກ່ທ່ານ ແລະ ຄອບຄົວ ຊຶ່ງຈະຊ່ວຍໃຫ້ທ່ານຊຳລະເງິນກູ້ໄດ້ ແລະ ຊ່ວຍໃຫ້ຄົນທີ່ທ່ານຮັກໃຊ້ຊີວິດໂດຍໄດ້ຮັບການຄຸ້ມຄອງທາງການເງິນ.

**ພຣູປະກັນເງິນກູ້ ພລັສ** ນຳສະເໜີແຜນຄຸ້ມຄອງການເງິນທີ່ຫຼາກຫຼາຍສຳລັບ**ສິນເຊື່ອລົດໃຫ່ຍ**, **ສິນເຊື່ອທຸລະກິດ SME ແລະ ສິນເຊື່ອເຮືອນ**.

### myCar
(ສຳລັບສິນເຊື່ອລົດໃຫຍ່)

ຂັບເຄື່ອນຄວາມຝັນໄດ້ດ້ວຍ **ພຣູປະກັນເງິນກູ້ ພລັສ** - **myCar** (ສຳລັບສິນເຊື່ອລົດໃຫຍ່) ແຜນປະກັນເງິນກູ້ ເພື່ອປົກປ້ອງ ແລະ ບັນລຸເປົ້າໝາຍການເປັນເຈົ້າຂອງລົດໃຫຍ່ໃນຝັນຄອບຄົວຂອງທ່ານ.

### myHome
(ສຳລັບສິນເຊື່ອເຮືອນ)

ໃຊ້ຊີວິດຄອບຄົວຂອງທ່ານໃຫ້ດີທີ່ສຸດ ຕອນນີ້ ດ້ວຍຜະລິດຕະພັນ**ພຣູປະກັນເງິນກູ້ ພລັສ** - **myHome** (ສຳລັບສິນເຊື່ອເຮືອນ) ແຜນປະກັນຄຸ້ມຄອງເງິນກູ້ ເພື່ອປົກປ້ອງ ແລະ ບັນລຸເປົ້າໝາຍການເປັນເຈົ້າຂອງເຮືອນໃນຝັນຄອບຄົວຂອງທ່ານ.

### mySME
(ສຳລັບສິນເຊື່ອທຸລະກິດ SME)

ເລີ່ມຕົ້ນທຸລະກິດໃນຝັນຂອງທ່ານໄດ້ແລ້ວ ຕອນນີ້ດ້ວຍ **ພຣູປະກັນເງິນກູ້ ພລັສ** - **mySME** (ສຳລັບສິນເຊື່ອ ທຸລະກິດ **SME**) ແຜນປະກັນຄຸ້ມຄອງເງິນກູ້ ຊຶ່ງຈະຊ່ວຍໃຫ້ທ່ານອຸ່ນໃຈໄດ້ວ່າທຸລະກິດຂອງທ່ານສາມາດດຳເນີນໄປໄດ້ໃນຊ່ວງເວລາທີ່ຍາກລຳບາກ.

- ✔ ຮັບຄວາມຄຸ້ມຄອງທາງການເງິນເພື່ອຊຳລະໜີ້ສິນຂອງທ່ານ ໃນກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ ເນື່ອງຈາກອຸປະຕິເຫດ.
- ✔ ປົກປ້ອງຄົນທີ່ທ່ານຮັກຈາກພາລະທາງການເງິນໃນອະນາຄົດ.

**ບໍລິສັດ ພຣູເດັນໂຊລ໌ ປະກັນໄພຊີວິດ (ລາວ) ຈຳກັດ**
ຊັ້ນ 5 ອາຄານ ວຽງຈັນເຊັນເຕີ້, ຖະໜົນ ຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
(856) 21 211123 | info@prudential.la | www.prudential.la | ໜຶ່ງໃນກຸ່ມ ບໍລິສັດ ພຣູເດັນໂຊລ໌ ມະຫາຊົນ

## ຄຸນລັກສະນະຂອງຜະລິດຕະພັນ

**ການຊຳລະຄ່າທຳນຽມ**
ຊຳລະແບບງວດດຽວ

**ອາຍຸທີ່ມີສິດສະໝັກໄດ້**
18 ປີ ຫາ 60 ປີ

**ວົງເງິນຄຸ້ມຄອງ**
15.000.000 ກີບ (ຂັ້ນຕໍ່າ) ~ 7.500.000.000 ກີບ (ສູງສຸດ)

**ປະເພດຂອງການຄຸ້ມຄອງ**
ປະກັນຊີວິດທີ່ຈຳນວນວົງເງິນປະກັນຫຼຸດລົງ ຫຼື ປະກັນຊີວິດທີ່ຈຳນວນວົງເງິນປະກັນຄົງທີ່

**ທາງເລືອກໄລຍະເວລາການຄຸ້ມຄອງ**
- **myCar** (ສຳລັບສິນເຊື່ອລົດໃຫຍ່) 1–8 ປີ
- **myHome** (ສຳລັບສິນເຊື່ອເຮືອນ) 1–15 ປີ
- **mySME** (ທຸລະກິດ SME) 1–10 ປີ

## ວິທີທີ່ທ່ານສາມາດ ເພີ່ມປະສິດທິພາບການປົກປ້ອງ ໄດ້ຕາມຄວາມຕ້ອງການຂອງທ່ານ

| ແຜນຄຸ້ມຄອງຂັ້ນພື້ນຖານ | ແຜນຄຸ້ມຄອງເພີ່ມເຕີມ |
|---|---|
| ຜົນປະໂຫຍດໃນກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນເນື່ອງຈາກທີ່**ບໍ່ເກີດຈາກອຸປະຕິເຫດ** | |
| 100% ຂອງວົງເງິນຄຸ້ມຄອງ | |
| ເງິນອຸດໜູນສົ່ງສະການແຜນປະກັນຂັ້ນພື້ນຖານ 3.000.000ກີບ | |
| ຜົນປະໂຫຍດໃນກໍລະນີເສຍຊີວິດ ຫຼື ເສຍອົງຄະແບບສິ້ນເຊີງ ແລະ ຖາວອນເນື່ອງຈາກທີ່**ເກີດຈາກອຸປະຕິເຫດ***| |
| ✖ | 100% ຂອງວົງເງິນຄຸ້ມຄອງຜົນປະໂຫຍດເພີ່ມເຕີມໃນກໍລະນີເສຍຊີວິດ ແລະ ເສຍອົງຄະແບບສິ້ນເຊີງ ແລະ ຖາວອນ ເນື່ອງຈາກອຸປະຕິເຫດ |

**ໝາຍເຫດ**

- ຈຳນວນວົງເງິນສ່ວນເກີນຫຼັງຈາກທີ່ມອບໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດທີໜຶ່ງແລ້ວນັ້ນ, ແມ່ນຈະຈ່າຍໃຫ້ກັບຜູ້ໄດ້ຮັບຜົນປະໂຫຍດທີສອງ.
- ວົງເງິນປະກັນແມ່ນເທົ່າກັບຈຳນວນເງິນກູ້ໃນເວລາທີ່ຍື່ນຄຳຮ້ອງສະໝັກປະກັນ. ວົງເງິນປະກັນທີ່ຈະສະໜອງໃຫ້ໃນລະຫວ່າງໄລຍະເວລາຂອງສັນຍາປະກັນແມ່ນຖືກກຳນົດດັ່ງທີ່ສະແດງຢູ່ໃນຕາຕະລາງລາຍລະອຽດຂອງຜົນປະໂຫຍດຈາກທາງບໍລິສັດ.